# ການນຳໃຊ້ບັດ Honored Citizen Hop ໃໝ່ຂອງທ່ານ

ຕື່ມເງິນໃສ່ບັດຂອງທ່ານ. ຫຼັງຈາກນັ້ນ, ພຽງແຕ່ແຕະແລ້ວໄປໄດ້ເລີຍ!




## ການເລີ່ມຕົ້ນ

### 1. ວິທີການຕື່ມເງິນໃສ່ບັດຂອງທ່ານ:

- ເຂົ້າເບິ່ງເວັບໄຊທ໌ **myhopcard.com** ຫຼື ໃຊ້ແອັບ Hop Fastpass®
- ໂທ **1-844-694-6722**
- ໃຊ້ຕູ້ຂາຍບັດ Hop ຢູ່ສະຖານີ MAX ແລະ WES
- ຕື່ມເງິນໄດ້ຢູ່ທີ່ຮ້ານຂາຍເຄື່ອງຍ່ອຍ ແລະ ຮ້ານສະດວກຊື້ທ້ອງຖິ່ນຫຼາຍຮ້ອຍແຫ່ງ

ເມື່ອທ່ານລົງທະບຽນບັດຂອງທ່ານຢູ່ທີ່ **myhopcard.com**, ຍອດເງິນຂອງທ່ານຈະຖືກປົກປ້ອງຖ້າບັດຂອງທ່ານສູນເສຍ ຫຼື ຖືກລັກ.

### 2. ແຕະບັດຂອງທ່ານໃສ່ເຄື່ອງອ່ານ Hop ສີຂຽວທຸກຄັ້ງທີ່ທ່ານຂຶ້ນລົດ ຫຼື ປ່ຽນສາຍ.

- ໃນການແຕະບັດຄັ້ງທຳອິດຂອງທ່ານ, ທ່ານຈະຖືກຄິດຄ່າບໍລິການ $1.40, ແລະ ທ່ານສາມາດຂີ່ໄດ້ເປັນເວລາ 2½ ຊົ່ວໂມງ.
- ຖ້າທ່ານແຕະອີກຄັ້ງຫຼັງຈາກ 2½ ຊົ່ວໂມງ, ທ່ານຈະຖືກຄິດຄ່າບໍລິການອີກ $1.40 ແຕ່ຄ່າໂດຍສານຂອງທ່ານຈະໃຊ້ໄດ້ຕະຫຼອດມື້ (ທ່ານໄດ້ຮັບບັດໂດຍສານປະຈຳວັນ).
- ທ່ານຈະບໍ່ຖືກຄິດຄ່າທຸກຄັ້ງທີ່ທ່ານແຕະ, ແຕ່ການແຕະຂອງທ່ານແມ່ນຫຼັກຖານຢັ້ງຢືນການຊຳລະເງິນຂອງທ່ານ.
- ຖ້າທ່ານກຳລັງໃຊ້ປີ້ລົດ Honored Citizen Hop, ທ່ານສາມາດໃຊ້ບັດ Hop ທີ່ມີຮູບ ແລະ ລະບຸວ່າເປັນພົນລະເມືອງກິດຕິມະສັກຂອງທ່ານ ເພື່ອເປັນຫຼັກຖານຢັ້ງຢືນວ່າທ່ານມີສິດ.

ເພື່ອຂໍຄວາມຊ່ວຍເຫຼືອ ຫຼື ລາຍງານບັດເສຍ, ສົ່ງອີເມວໄປທີ່ **help@myhopcard.com** ຫຼື ໂທຫາ **1-844-694-6722**.

ເພື່ອຮຽນຮູ້ເພີ່ມເຕີມ ເຂົ້າເບິ່ງ
**trimet.org/hopcard**

240636 • 1/25

TRIMET
How life moves®